ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3463 /ກງ
ນະຄອນຫຼວງວຽງຈັນ, ວັນທີ 29 ຕຸລາ 2018

# ແຈ້ງການ

ເຖິງ: ກົມພາສີ.

ເລື່ອງ: ການນຳໃຊ້ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟ (ເສຍພາສີ-ອາກອນ) ດ້ວຍຕົນເອງ ບໍ 88.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2011.
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ.
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 06435 /ກພສ, ລົງວັນທີ 26 ຕຸລາ 2018.

ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍເນື້ອໃນມາດຕາ 34 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ໃນການຄຸ້ມຄອງ ແລະ ຕິດຕາມ ກວດກາການນຳເຂົ້ານ້ຳມັນເຊື້ອໄຟ ພາຍຫຼັງທີ່ເສຍພາສີ-ອາກອນ ແລະ ພັນທະອື່ນແລ້ວ ໃນການຈໍລະຈອນ ຫຼື ເຄື່ອນຍ້າຍຈາກດ່ານບ່ອນນຳເຂົ້າຈາກແຂວງໜຶ່ງໄປຍັງແຂວງອື່ນ ໃຫ້ມີຄວາມສະດວກວ່ອງໄວ, ຫຼຸດຜ່ອນຂັ້ນຕອນ, ຮັບປະກັນຕໍ່ການຄຸ້ມຄອງ ແລະ ສາມາດກວດສອບໄດ້.

**ລັດຖະມົນຕີກະຊວງການເງິນ ອອກແຈ້ງການດັ່ງນີ້:**

1. ມອບໃຫ້ກົມພາສີ ຄຸ້ມຄອງ, ກວດກາເງື່ອນໄຂ ແລະ ພິຈາລະນາອະນຸມັດໃຫ້ບັນດາບໍລິສັດທີ່ມີເງື່ອນໄຂຄົບຖ້ວນໃນການອອກເອກະສານໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟດ້ວຍຕົນເອງ (ສະເພາະນ້ຳມັນທີ່ນຳເຂົ້າມາໄດ້ເສຍພາສີ-ອາກອນ ແລະ ພັນທະອື່ນ) ໂດຍນຳໃຊ້ແບບພິມທີ່ກຳນົດໄວ້ ບໍ 88;
2. ການຈັດພິມແບບຟອມໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟດ້ວຍຕົນເອງ ບໍ 88 ໃຫ້ກົມພາສີ ເປັນຜູ້ດຳເນີນການຈັດພິມ, ຄຸ້ມຄອງ ແລະ ແຈກຢາຍໃຫ້ບັນດາບໍລິສັດທີ່ມີເງື່ອນໄຂຄົບຖ້ວນ ເພື່ອນຳໃຊ້ໃນການອອກໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟໃຫ້ມີປະສິດທິຜົນ, ສະດວກວ່ອງໄວ ແລະ ສາມາດກວດສອບໄດ້;
3. ໃຫ້ກົມພາສີປະສານສົມທົບກັບກົມສ່ວຍສາອາກອນ ແລະ ພາກສ່ວນກ່ຽວຂ້ອງຄົ້ນຄວ້າອອກບົດແນະນຳລະອຽດ ແລະ ກຳນົດຫຼັກການຄຸ້ມຄອງຈັດຕັ້ງປະຕິບັດຕົວຈິງເພີ່ມຕື່ມ;

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີ ກະຊວງການເງິນ

ບຸນໂຈມ ອຸບົນປະເສີດ

**ບ່ອນສົ່ງ:**

| | |
|---|---|
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ "ເພື່ອຊາບ" |
| - ກະຊວງອຸດສາຫະກຳການຄ້າ | 01 ສະບັບ "ເພື່ອຊາບ" |
| - ສະພາການຄ້າ ແລະ ອຸດສາຫະກຳ | 01 ສະບັບ "ເພື່ອຊາບ" |
| - ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ | 01 ສະບັບ "ເພື່ອຈັດຕັ້ງປະຕິບັດ" |
| - ສຳເນົາເກັບມ້ຽນ | 01 ສະບັບ |